ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
.....................

ກະຊວງການເງິນ
ກົມພາສີ

ເລກທີ 07366/ກພສ
ນະຄອນຫຼວງວຽງຈັນ, ວັນທີ 14 NOV 2017

**ບົດແນະນຳ**
**ວ່າດ້ວຍການນຳໃຊ້ ໂມດູນຄຸ້ມຄອງການຂົນສົ່ງສິນຄ້າ (Manifest Module) ທົດລອງ ຢູ່ດ່ານພາສີສາກົນຂົວມິດຕະພາບ II, ດ່ານພາສີສາກົນແດນສະຫວັນ, ໜ່ວຍງານພາສີປະຈຳສາງທ່າບົກ, ດ່ານພາສີສາກົນບໍ່ເຕັນ ແລະ ດ່ານພາສີສາກົນຂົວມິດຕະພາບ IV**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ: 2826/ກງ, ລົງວັນທີ: 22 ສິງຫາ 2017, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມພາສີ;
- ອີງຕາມ ບົດແນະນຳຂອງກົມພາສີ ສະບັບເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017 ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ: 7358 /ກພສ, ລົງວັນທີ: 14 ພະຈິກ 2017, ວ່າດ້ວຍການນຳໃຊ້ ໂມດູນຄຸ້ມຄອງການຂົນສົ່ງສິນຄ້າ ແລະ ໂມດູນຄຸ້ມຄອງການເຄື່ອນຍ້າຍສິນຄ້າ.

ເພື່ອຮັບປະກັນໃຫ້ການຄຸ້ມຄອງ, ກວດກາ, ຕິດຕາມ, ແຈ້ງຂໍ້ມູນເອກະສານຂົນສົ່ງສິນຄ້າ ມີລັກສະນະກະທັດຮັດ, ຮັດກຸມ ແລະ ທັນສະໄໝ ຂຶ້ນກວ່າເກົ່າ.

**ຫົວໜ້າກົມພາສີ ອອກບົດແນະນຳ :**

**I. ຈຸດປະສົງ**

ບົດແນະນຳສະບັບນີ້ ແມ່ນເພື່ອກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນໃນການນຳໃຊ້ ໂມດູນຄຸ້ມຄອງການຂົນສົ່ງສິນຄ້າ (Manifest Module) ເພື່ອອຳນວຍຄວາມສະດວກໃນການຕິດຕາມ, ກວດກາ ການແຈ້ງຂໍ້ມູນການຂົນສົ່ງສິນຄ້າ ເຂົ້າ ສາງພັກສິນຄ້າ ແລະ ສາມາດຫັກລົບໄດ້ ໃນເວລາແຈ້ງພາສີເປັນລາຍລະອຽດ ໃຫ້ມີຄວາມເອກະພາບ ແລະ ທັນສະໄໝຂຶ້ນກວ່າເກົ່າ.

**II. ຫຼັກການ ແລະ ຂອບເຂດການນຳໃຊ້**

ບົດແນະນຳສະບັບນີ້ ແມ່ນນຳໃຊ້ທົດລອງ ສະເພາະ ຢູ່ ດ່ານພາສີສາກົນຂົວມິດຕະພາບ II, ດ່ານພາສີສາກົນແດນສະຫວັນ, ໜ່ວຍງານພາສີປະຈຳສາງທ່າບົກ, ດ່ານພາສີສາກົນບໍ່ເຕັນ ແລະ ດ່ານພາສີສາກົນຂົວມິດຕະພາບ IV ເພື່ອເປັນການທົດລອງນຳໃຊ້ໂມດູນ, ປັບປຸງໂມດູນໃຫ້ສົມບູນ ແລະ ເປັນການສ້າງເງື່ອນໄຂ ໃນການຜັນຂະຫຍາຍ, ຕິດຕັ້ງ ໂມດູນດັ່ງກ່າວ ໃນຂອບເຂດທົ່ວປະເທດ.

**III. ຂັ້ນຕອນການນຳໃຊ້ ໂມດູນຄຸ້ມຄອງການຂົນສົ່ງສິນຄ້າ**

1. ຜູ້ບໍລິການຂົນສົ່ງ ຕ້ອງແຈ້ງຂໍ້ມູນການຂົນສົ່ງສິນຄ້າ ຢ່າງໜ້ອຍ 24 ຊົ່ວໂມງ ກ່ອນສິນຄ້າມາ. ການແຈ້ງຂໍ້ມູນການຂົນສົ່ງ ໃນໂມດູນ (Manifest) ໃນລະບົບ ASYCUDA ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:



Scanned by CamScanner

- ການແຈ້ງຂໍ້ມູນການຂົນສົ່ງລວມ: ຜູ້ບໍລິການຂົນສົ່ງຕ້ອງປະກອບຂໍ້ມູນການຂົນສົ່ງລວມ (General Segment) ໂດຍການຂົນສົ່ງສິນຄ້າ 1 ຄັ້ງ (1 shipment) ໃຫ້ປະກອບຂໍ້ມູນການຂົນສົ່ງລວມ 1 ຊຸດ.
- ການແຈ້ງຂໍ້ມູນການຂົນສົ່ງລະອຽດ: ພາຍຫຼັງສຳເລັດການປະກອບຂໍ້ມູນການຂົນສົ່ງລວມແລ້ວ, ຜູ້ບໍລິການຂົນສົ່ງ ຕ້ອງປະກອບຂໍ້ມູນລາຍລະອຽດຂອງໃບກຳກັບການຂົນສິນຄ້າ (Bill of Lading/Truck Bill) ລົງໃນພາກຂໍ້ມູນຂົນສົ່ງລະອຽດ(Way Bill).
- ການລົງທະບຽນການແຈ້ງຂໍ້ມູນການຂົນສົ່ງ: ລະບົບອາຊີກູດາ ຈະກຳນົດເລກທີລົງທະບຽນການຂົນສົ່ງ (Manifest Reference No.) ເພື່ອເປັນຂໍ້ມູນອ້າງອີງສຳລັບການປະກອບໃບແຈ້ງພາສີເປັນລາຍລະອຽດ.

2. ການແຍກລະອຽດໃບກຳກັບການຂົນສົ່ງສິນຄ້າ:
   - ໃນກໍລະນີໃບກຳກັບການຂົນສິນຄ້າ ເປັນ Master Bill (ໃບກຳກັບການຂົນສິນຄ້າລວມ), ຜູ້ບໍລິການຂົນສົ່ງ ຕ້ອງແຍກເປັນຂໍ້ມູນການຂົນສົ່ງລະອຽດ (degroupage) ຈຶ່ງດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດໄດ້.
   - ໃນກໍລະນີໃບກຳກັບການຂົນສິນຄ້າ ເປັນ House Bill (ໃບກຳກັບການຂົນສິນຄ້າຍ່ອຍ), ຜູ້ບໍລິການຂົນສົ່ງ ບໍ່ຈຳເປັນຕ້ອງແຍກຂໍ້ມູນການຂົນສິນຄ້າ ແລະ ສາມາດດຳເນີນການແຈ້ງພາສີເປັນລາຍລະອຽດໄດ້ເລີຍ.
3. ການດັດແກ້ຂໍ້ມູນການຂົນສົ່ງ:

   ການດັດແກ້ຂໍ້ມູນການຂົນສົ່ງ: ໃນກໍລະນີ ຂໍ້ມູນໃບກຳກັບການຂົນສິນຄ້າ ບໍ່ກົງກັບຂໍ້ມູນການຂົນສົ່ງລວມ ເນື່ອງຈາກຄວາມຈຳເປັນໃດໜຶ່ງ ເຊັ່ນ: ນ້ຳໜັກສິນຄ້າ ສູງເກີນຄວາມສາມາດບັນທຸກຂອງເຮືອ ຫຼື ລົດບັນທຸກ ເຊິ່ງຈຳເປັນຕ້ອງໄດ້ຂົນສິນຄ້າຈຳນວນໜຶ່ງລົງ ກ່ອນອອກເດີນທາງ, ຜູ້ບໍລິການຂົນສົ່ງ ຕ້ອງນຳເອົາເອກະສານ ແລະ ຫຼັກຖານການປ່ຽນແປງດ້ານການຂົນສົ່ງທັງໝົດ ໄປແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳສາງພັກສິນຄ້າ ເພື່ອດຳເນີນການດັດແກ້ຂໍ້ມູນໃນລະບົບອາຊີກູດາໃຫ້ຖືກຕ້ອງກັບສິນຄ້າຕົວຈິງທີ່ຂົນສົ່ງມາຮອດສາງຕົວຈິງ.

## IV. ຂັ້ນຕອນການແຈ້ງພາສີເປັນລາຍລະອຽດ

ໃນການແຈ້ງພາສີເປັນລາຍລະອຽດ ຜູ້ແຈ້ງພາສີຕ້ອງປະຕິບັດ ຕາມຂັ້ນຕອນ ຄື:

- ເຈົ້າຂອງສິນຄ້າ ຫຼື ຜູ້ບໍລິການແຈ້ງພາສີ (ບໍລິສັດ ສະຫວັນໂລຈິສຕິກ) ຕ້ອງດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ຢູ່ຫ້ອງການພາສີປະຈຳສາງທ່າບົກສະຫວັນນະເຂດ ໂດຍປະຕິບັດຕາມ ຂັ້ນຕອນທີ່ກຳນົດໃນບົດແນະນຳຂອງກົມພາສີ ເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017. ການປະກອບຂໍ້ມູນການແຈ້ງພາສີເປັນລາຍລະອຽດ, ຜູ້ແຈ້ງພາສີ (ຜູ້ບໍລິການຈັດສົ່ງສິນຄ້າ ຫຼື ຕົວແທນ) ຕ້ອງແຈ້ງເລກທີຂໍ້ມູນການຂົນສົ່ງສິນຄ້າ (Manifest) ແລະ ເລກທີໃບກຳກັບການຂົນສົ່ງສິນຄ້າ (Bill of Lading/Truck Bill) ໃສ່ໃບແຈ້ງພາສີເປັນລາຍລະອຽດ ເພື່ອໃຫ້ລະບົບອາຊີກູດາສາມາດກວດກາ ແລະ ເຊື່ອມໂຍງຂໍ້ມູນການຂົນສົ່ງສິນຄ້າ ເຂົ້າກັບໃບແຈ້ງພາສີເປັນລາຍລະອຽດ ແບບອັດຕະໂນມັດ.
- ໃບກຳກັບການຂົນສິນຄ້າ House Bill 1 ໃບ ຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ 1 ຊຸດ ແລະ ຄັດຕິດໃບກຳກັບການຂົນສິນຄ້າດັ່ງກ່າວ ໃສ່ໃບແຈ້ງພາສີເປັນລາຍລະອຽດທຸກຄັ້ງ ເພື່ອຍື່ນໃຫ້ເຈົ້າໜ້າທີ່ພາສີດຳເນີນການກວດກາ.
- ໃນກໍລະນີ ບາງລາຍການສິນຄ້າ ທີ່ບໍ່ໄດ້ປະກອບເອກະສານໃບແຈ້ງພາສີເປັນລາຍລະອຽດ ໃນການລຶບລ້າງໃບກຳກັບການຂົນສິນຄ້າ, ເຈົ້າໜ້າທີ່ພາສີປະຈຳສາງພັກເຄື່ອງ ຕ້ອງໄດ້ລຶບລ້າງໃບກຳກັບການຂົນສິນຄ້າດັ່ງກ່າວດ້ວຍລະບົບ ໂດຍນຳໃຊ້ຄຳສັ່ງ "Manual Discharge".



Scanned by CamScanner

## V. ການຈັດຕັ້ງປະຕິບັດ

ມອບໃຫ້ ພະແນກລະບຽບການ ແລະ ຂັ້ນຕອນການແຈ້ງ ສົມທົບກັບ ພະແນກແຜນການ ແລະ ຂໍ້ມູນຂ່າວສານ ຂຶ້ນແຜນເຜີຍແຜ່, ແນະນໍາວິທີການນໍາໃຊ້, ຕິດຕັ້ງໂມດູນດັ່ງກ່າວ ເພື່ອທົດລອງນໍາໃຊ້ ຢູ່ບັນດາດ່ານພາສີສາກົນເປົ້າໝາຍ ໃຫ້ສໍາເລັດຕາມເປົ້າໝາຍ.

ມອບໃຫ້ ພະແນກການອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີ, ບັນດາດ່ານພາສີສາກົນໃນຂອບເຂດທົ່ວປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດແນະນໍາສະບັບນີ້ຢ່າງເຂັ້ມງວດ.

## VI. ຜົນສັກສິດ

ບົດແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**<u>ຮັກສາການຫົວໜ້າກົມພາສີ</u>**

ກະຊວງ ການເງິນ
ກົມພາສີ

ບຸນປະເສີດ ສີກຸນລະບຸດ



Scanned by CamScanner